HOONGSENGPHA et al. (2023). Souphanouvong University Journal of Multidisciplinary Research and Development. ISSN 2521-0653. Volume 9. Issue 3. Jul - Sep. 2023. Page 25 – 33

# ຄວາມຕ້ອງການ ແລະ ການນຳໃຊ້ບຸກຄະລາກອນທາງດ້ານພາສາຈີນຂອງຜູ້ປະກອບການທຸລະກິດ ຂະໜາດນ້ອຍ ໃນນະຄອນຫຼວງພະບາງ

**ສຸດທິດາ ຮຸ່ງແສງຟ້າ[1], ທອງຄູນ ພິມມະຈັກ, ສາຍທະລາ ສາຍບຸນເຮືອງ, ພຸດທະລັກ ພັນທຸອາມາດ**

*ສະຖາບັນຂົງຈື້ ມະຫາວິທະຍາໄລ ສຸພານຸວົງ, ສປປ ລາວ*

[1] **ຕິດຕໍ່ພົວພັນ:** *ສຸດທິດາ ຮຸ່ງແສງຟ້າ, ສະຖາບັນຂົງຈື້ ມະຫາວິທະຍາໄລ ສຸພານຸວົງ, ເບີໂທ:: +856 20 5584 2828, ອີເມວ:* soudthida@gmail.com

***ຂໍ້ມູນບົດຄວາມ:***

*ການສົ່ງບົດ: 23 ຕຸລາ 2022*

*ການປັບປຸງ: 05 ມິຖຸນາ 2023*

*ການຕອບຮັບ: 26 ມິຖຸນາ 2023*

**ບົດຄັດຫຍໍ້**

ການສຶກສາຄັ້ງນີ້ເປັນການສຶກສາກ່ຽວກັບຄວາມຕ້ອງການ ແລະ ພັດທະນາບຸກຄະລາກອນທາງດ້ານພາສາຈີນ ຂອງຫົວໜ່ວຍທຸລະກິດ SMEs ໃນນະຄອນຫຼວງພະບາງ. ກຸ່ມເປົ້າໝາຍແມ່ນຜູ້ປະກອບທຸລະກິດ SMEs ຈຳນວນ 400 ຄົນ ແລະ ເຄື່ອງມືທີ່ໃຊ້ເຂົ້າໃນການເກັບຂໍ້ມູນ ແມ່ນແບບສອບຖາມ ທີ່ມີລັກສະນະ 5 ລະດັບຂອງ Likert Scale ທີ່ມີຄວາມໜ້າເຊື່ອຖືໃນລະດັບ 0.904 (90.4%) ແລະ ໂດຍນຳໃຊ້ໂປຼແກຼມ SPSS 24.0 ເຂົ້າໃນການວິເຄາະຂໍ້ມູນ ໄດ້ແກ່: ຄ່າຄວາມຖີ່, ສ່ວນຮ້ອຍ, ຄ່າສະເລ່ຍ, ຄ່າຜັນປ່ຽນມາດຕະຖານ ແລະ ການທົດສອບຄວາມແຕກຕ່າງແບບ F-test.

ຜົນການສຶກສາພົບວ່າ ຫົວໜ່ວຍທຸລະກິດ SMEs ໃນນະຄອນຫຼວງພະບາງ ສ່ວນຫຼາຍແມ່ນຍັງບໍ່ມີບຸກຄະລາກອນທາງດ້ານພາສາຈີນ ແລະ ແມ່ນມີຄວາມຕ້ອງການບຸກຄະລາກອນດ້ານພາສາຈີນໃນລະດັບຫຼາຍ. ເນື່ອງຈາກວ່າ ປັດຈຸບັນ ຫຼວງພະບາງ ມີບຸກຄະລາກອນທາງດ້ານພາສາຈີນຍັງຈຳກັດບໍ່ສາມາດຕອບສະໜອງຄວາມຕ້ອງການໃນຫຼາຍອົງກອນ ເຊິ່ງໃນນັ້ນ ຫົວໜ່ວຍທຸລະກິດ SMEs ຈຳນວນໜຶ່ງແມ່ນມີຄວາມຕ້ອງການຍົກລະດັບ/ບຳລຸງ ພາສາຈີນໃຫ້ກັບພະນັກງານຂອງຕົນ ເພື່ອເປັນການເພີ່ມຂະຫຍາຍການພົວພັນຮ່ວມມື ແລະ ພັດທະນາອົງກອນ, ທັງເປັນການຍົກລະດັບຄວາມຮູ້ ແລະ ເປັນການສ້າງແຮງຈູງໃນການເຮັດວຽກໃຫ້ກັບພະນັກງານໃນອົງກອນ ເຊິ່ງຫຼັກສູດທີ່ມີຄວາມຕ້ອງການຝຶກອົບຮົມຫຼາຍກ່ວາໝູ່ແມ່ນ ພາ ສາຈີນສຳລັບນຳໃຊ້ໃນອົງກອນ ຫຼື ກ່ຽວຂ້ອງໃນອົງກອນ ທີ່ມີໄລຍະເວລາບໍ່ເກີນ 1 ປີ ໂດຍຮຽນຮ່ວມກັບອົງກອນອື່ນ ຫຼື ການເປີດສອນທົ່ວໄປ ໃນພາກແລງ/ຄ່ຳຂອງວັນລັດຖະການ ທີ່ສອນໂດຍອາຈານຄົນລາວ ກັບ ອາຈານຈີນສອນຮ່ວມກັນ.

ຫົວໜ່ວຍທຸລະກິດ SMEs ໃນນະຄອນຫຼວງພະບາງ ມີຄວາມຕ້ອງການບຸກຄະລາກອນດ້ານພາສາຈີນທີ່ມີຄຸນລັກສະນະທີ່ສຳຄັນໃນ 3 ດ້ານຄື: ຄວາມສາມາດດ້ານພາສາຈີນ, ທັກສະໃນການສື່ສານດ້ານພາສາຈີນ ແລະ ເຂົ້າໃຈໃນວັດທະນະທຳຈີນ. ນອກນັ້ນ, ຜົນການທົດສອບສົມມຸດຖານຍັງພົບວ່າ: 1) ທຸລະກິດ SMEs ທີ່ມີຂະໜາດທຸລະກິດເປັນຈຸນລະວິສາຫະກິດ, ລະວິສາຫະກິດຂະໜາດນ້ອຍ ແລະ ລະວິສາຫະກິດຂະໜາດກາງ ໃນນະຄອນຫຼວງພະບາງໄດ້ ແມ່ນມີຄວາມຕ້ອງການບຸກຄະລາກອນທາງດ້ານພາສາຈີນທີ່ແຕກຕ່າງກັນໃນດ້ານ: ຄວາມເຂົ້າໃຈໃນວັດທະນະທຳຈີນ ແລະ ທັດສະນະຄະຕິຕໍ່ອົງກອນ; 2) ທຸລະກິດ SMEs ທີ່ມີ ຮູບແບບການດຳເນີນງານໃນແບບສ່ວນບຸກຄົນ ແລະ ແບບຮ່ວມທຶນໃນນະຄອນຫຼວງພະບາງ ແມ່ນມີຄວາມຕ້ອງການບຸກຄະລາກອນທາງດ້ານພາສາຈີນທີ່ແຕກຕ່າງກັນໃນດ້ານ: ຄວາມຄິດສ້າງສັນ ແລະ ທັດສະນະຄະຕິຕໍ່ອົງກອນ.

**ຄຳສຳຄັນ:** *ຄວາມຕ້ອງການ, ບຸກຄະລາກອນດ້ານພາສາຈີນ, ທຸລະກິດ SMEs*

# Analysis of Demand Chinese Language Staff and Using on SMEs in Luang Prabang Capital

**Soudthida HOONGSENGPHA[1] Thongkhoun PHOMMACHACK, Saythala SAYBOUNHEUANG, Poutthalack PHANTOUAMATH**

*Confucius Institute, Souphanouvong University, Lao PDR*

[1]***Correspondence:*** *Soudthida HOONGSENGPHA, Confucius Institute, Souphanouvong University, Tel: +856 20 5584 2828, E-mail: soudthida@gmail.com*

***Article Info:***
*Submitted: Oct 23, 2022*
*Revised: Jun 05, 2023*
*Accepted: Jun 26, 2023*

**Abstract**

This research to analysis of demand for Chinese Language Staff and Using on SMEs in Luang Prabang city. Using by 8 characteristics identified are linguistic proficiency, Communicative, Culture, Content, Citizenship, Attitudes, Vocational and Critical for consider personnel for development of SMEs: this paper is based on the actual opinions of SMEs business who have been recorded in a questionnaire of 400 units and using five level of Likert Scale of questionnaire to collect data, there is a reliability level of 0.904 (90.4%) and Using SPSS 24.0 statistical software for data analyzed by the frequency, percent, mean, standard deviation and one way ANOVA Analysis.

The result of the research found that:

The SMEs business in Luang Prabang are most of the entrepreneurs are married women, aged between 41-50 years old with bachelor's degree which is a small business in the service sector and has been business between 6-9 years in an individual/family mode. More than half of SMEs business in Luang Prabang do not yet have Chinese language staff. Currently SMEs business in Luang Prabang. At present, SMEs business in Luang Prabang are need of large number of Chinese language staff. In which, a few SMEs business need to improve Chinese language for their staff to increase cooperation and develop the business， both to improve knowledge and to create motivation to work for the staff in the organization. The courses that require more training than others are Chinese language for use in organizations or related organizations with a duration of not more than 1 year by studying together with other organizations or general teaching in the evening/evening of official days taught by Lao teachers and Chinese teachers together.

The SMEs business in Luang Prabang need Chinese language staff with 3 main characteristics in 3 aspects are: Chinese language ability, Chinese language communication skills and understanding of Chinese culture. In addition, the results of the hypothesis test also found that: 1) Different types of SMEs in Luang Prabang have different needs for Chinese language staff by: Chinese culture understanding and work attitude. 2) Different Models of SMEs in Luang Prabang have different needs for Chinese language staff by: Creativity and work attitude.

**Keywords:** *Demand, Chinese Language Staff, SMEs*

## 1. ພາກສະເໜີ

ປັດຈຸບັນ ສປ ຈີນ ກໍາລັງເປັນປະເທດທີ່ມີຄວາມເຂັ້ມແຂງທາງດ້ານເສດຖະກິດ ແລະ ໄດ້ຮັບການຍອມຮັບຈາກບັນດາປະເທດ ແລະ ຂົງເຂດຕ່າງໆ ໃນທົ່ວໂລກ. ເນື່ອງຈາກວ່າ ສປ ຈີນ ໄດ້ມີໂຄງການ ເສັ້ນທາງສາຍໄໝແບບໃໝ່ ທີ່ເອີ້ນວ່າ “ໜຶ່ງແລວ ໜຶ່ງເສັ້ນທາງ”, ໂຄງການດັ່ງກ່າວ ແມ່ນມີຜົນຕໍ່ກັບການພັດທະນາພື້ນຖານໂຄງຮ່າງ ແລະ ເສດຖະກິດຂອງບັນດາປະເທດທີ່ຢູ່ແລວຂອງໂຄງການ, ໂດຍສະເພາະແມ່ນ ດ້ານການຄ້າ ແລະ ການລົງທຶນໃນຂົງ ເຂດພູມມີພາກອາຊີ ແລະ ອາຊຽນ. ເຊິ່ງໃນນັ້ນ, ພາສາຈີນ ແມ່ນພາສາໜຶ່ງທີ່ກໍາລັງໄດ້ຮັບການນິຍົມ ແລະ ຕ້ອງການໃຊ້ຢ່າງແຜ່ຫຼາຍ ບວກກັບນະໂຍບາຍການເປີດກວ້າງປະເທດຂອງຈີນ ເປັນສາເຫດເຮັດໃຫ້ ພາສາຈີນກາຍເປັນພາສາທີ່ສ້າງຄວາມໄດ້ປຽບທາງດ້ານເສດຖະກິດ, ການຄ້າ-ການລົງທຶນ ແລະ ການທ່ອງທ່ຽວ. ໂດຍສະເພາະໃນຂົງເຂດເສດຖະກິດອາຊີ ແລະ ອາຊຽນ. ດັ່ງນັ້ນ, ພາສາຈີນຈຶ່ງເປັນອີກພາສາທີ່ມີຄວາມສໍາຄັນ ແລະ ເປັນທີ່ນະຍົມໃນສັງຄົມປັດຈຸບັນ.

ບັນດາຫົວໜ່ວຍວິສາຫະກິດຂະໜາດນ້ອຍ ແລະ ກາງ (SMEs: Small and medium enterprises) ເປັນອົງປະກອບທີ່ສໍາຄັນຕໍ່ກັບການຂະຫຍາຍຕົວທາງດ້ານເສດຖະກິດ ແລະ ເປັນແຮງພັກດັນທີ່ສໍາຄັນໃນການສ້າງຄວາມເຂັ້ມແຂງທາງດ້ານເສດຖະກິດຂອງປະເທດ. ນອກນັ້ນ, SMEs ຍັງເປັນສູນລວມໃນການກໍ່ໃຫ້ເກີດການຜະລິດ, ການຄ້າ, ການບໍລິການ, ການລົງທຶນ, ການຈ້າງງານ , ການສ້າງລາຍຮັບ ແລະ ສິ່ງຜົນຕໍ່ກັບການດາລົງຊີວິດຂອງປະຊາຊົນ. ສ່ວນພາສາກໍ່ເປັນສິ່ງສໍາຄັນໃນການສື່ສານ ແລະ ການປະສານງານຂອງບັນດາຫົວໜ່ວຍທຸລະກິດ, ໂດຍສະເພາະ ປີ 2022 ໃນສປປ ລາວ ມີໂຄງການລົງທຶນ,ໂຄງການພັດທະນາ ແລະ ຫົວໜ່ວຍທຸລະກິດ ຈາກ ສປຈີນ 833 ໂຄງການ ແລະ ມີມູນຄ່າການລົງທຶນ 16.4 ຕື້ໂດລ່າສະຫະ ລັດ ເຊິ່ງເປັນອັນດັບໜຶ່ງໃນການລົງທຶນຂອງຕ່າງປະເທດໃນ ສປປ ລາວ (Asia News Network, 2022) ເຊິ່ງປະກອບມີ: ໂຄງການທາງລົດໄຟ, ທາງດ່ວນ, ເຂື່ອນໄຟຟ້າ, ຂຸດຄົ້ນບໍ່ແຮ່, ຮ້ານຄ້າ, ໂຮງແຮມ, ຮ້ານອາຫານ, ການບໍລິການຂົນສົ່ງ, ການທ່ອງທ່ຽວ ແລະ ອື່ນໆ, ເຊິ່ງທັງໝົດເຫຼົ່ານີ້ລ້ວນແຕ່ມີຄວາມຮຽກຮ້ອງຕ້ອງການບຸກຄະລາກອນທີ່ມີຄວາມຮູ້ຄວາມສາມາດທາງດ້ານພາສາຈີນ. ດັ່ງນັ້ນ, ພາສາຈີນ ເປັນອີກຕົວປ່ຽນໜຶ່ງທີ່ມີຄວາມສໍາຄັນໃນດ້ານການສ້າງຄວາມສາມາດທາງການແຂ່ງຂັນ ແລະ ຄວາມເຂັ້ມແຂງໃຫ້ກັບຫົວໜ່ວຍທຸລະກິດ SMEs ເພື່ອຕິດຕໍ່ ແລະ ເຮັດທຸລະກິດຮ່ວມກັບທຸລະກິດຂອງຊາວຈີນ. ຈາກເຫດຜົນດັ່ງກ່າວໄດ້ເຮັດໃຫ້ພາສາຈີນມີການຂະຫຍາຍຕົວຢ່າງໄວວາ ແລະ ມີແນວໂນ້ມເພີ່ມຂຶ້ນຢ່າງຫລວງຫລາຍ. ການຮັບສະໝັກເອົາບຸກຄະລາກອນມາເຮັດວຽກໃນອົງກອນ ແລະ ບັນດາຫົວໜ່ວຍທຸລະກິດຕາງໆ ກໍ່ໄດ້ມີເງື່ອນໄຂທາງດ້ານພາສາຈີນມາເປັນຕົວກໍານົດ.

ດັ່ງນັ້ນ, ທີມງານການຄົ້ນຄວ້າເຫັນວ່າ ພາສາຈີນແມ່ນຕົວຂັບເຂື່ອນໜຶ່ງທີ່ສໍາຄັນຂອງ SMEs ແລະ ມີຄວາມຈໍາເປັນທີ່ຕ້ອງການສຶກສາຄົ້ນຫາສະພາບຄວາມເປັນຈິງ ເພື່ອມາພັດທະນາການຮຽນ-ການສອນທາງດ້ານພາສາຈີນ ແລະ ໃຊ້ເປັນແນວທາງໃນການປັບປຸງລະບົບການສອນພາສາຈີນ ໃນສະຖາບັນຂອງພວກຂ້າພະເຈົ້າ ເພື່ອໃຫ້ເກີດຄວາມແທດເໝາະ ແລະ ສອດຄ່ອງກັບສະພາບຄວາມເປັນຈິງຢ່າງມີປະສິດທິພາບ ແລະ ມີປະສິດທິຜົນ.

ຈຸດປະສົງໃນການສຶກສາຄັ້ງນີ້ ປະກອບມີ 1) ການສຶກກ່ຽວກັບຄວາມຕ້ອງການນໍາໃຊ້ພາສາຈີນ ຂອງຜູ້ປະກອບການ SMEs ໃນນະຄອນຫຼວງພະບາງ, 2) ຄວາມຕ້ອງ ການບຸກຄະລາກອນທາງດ້ານພາສາຈີນ ຂອງຜູ້ປະກອບການ SMEs ໃນນະຄອນຫຼວງພະບາງ.

## 2. ວິທີການດໍາເນີນການຄົ້ນຄ້ວາ

### 2.1 ເຄື່ອງມືໃນການເກັບຂໍ້ມູນ

ເປັນການຄົ້ນຄ້ວາແບບປະລິມານທີ່ນໍາໃຊ້ແບບສອບຖາມ ເປັນເຄື່ອງມື ໃນການລວບລວມຂໍ້ມູນ ເພື່ອສຶກສາຄວາມຕ້ອງການແລະການນໍາໃຊ້ພາສາຈີນຂອງ ທຸລະກິດ SMEs ໃນນະຄອນຫຼວງພະບາງ ສປປ ລາວ, ໂດຍນາໃຊ້

ທິດສະດີ ຈາກ Brumfit & Roberts (1983), Brown (1995), Ellis & Jphnson (2009) ການສຶກສາຄວາມຕ້ອງການ ແລະ ການນຳໃຊ້ ເພື່ອການອອກແບບ ແລະ ພັດທະນາການສຶກທາງດ້ານສາພາສາ. ບົດຄົ້ນຄ້ວາຂອງ Koo Yew Lie (2006a, 2006b, 2007a, 2007b) ທີ່ສຶກສາຄວາມສາມາດທາງດ້ານພາສາທີ່ເປັນສິ່ງຕ້ອງການຂອງຕະຫຼາດແຮງງານ, ໂດຍພົບວ່າ: ບຸກຄະລາກອນທາງດ້ານພາສາຕ້ອງມີຄຸນສົມບັດ ຫຼື ຄຸນລັກສະນະ 8 ດ້ານ ທີ່ຜູ້ປະກອບການໃຊ້ໃນການພິຈາລະນາບຸກຄະລາກອນດ້ານພາສາ ເພື່ອເຂົ້າໃນການເຮັດວຽກງານ ເຊິ່ງປະກອບມີ: ຄວາມສາມາດທາງດ້ານພາສາ (Proficiency), ທັກສະໃນການສື່ສານ (Comunicative ), ການເຂົ້າໃຈໃນວັດທະນະທຳ (Culture), ການປະຍຸກຄວາມໝາຍ (Content), ຄຸນສົມບັດ ແລະ ສິນທຳປະຕິບັດ (Citizenship), ທັດສະນະຄະຕິຕໍ່ອີງກອນ (Attitudes), ທັກສະດ້ານວິຊາຊີບ (Vocational Literacy) ແລະ ຄວາມຄິດສ້າງສັນ (Critical ). ນອກນັ້ນ, Jordan (1977) ຍັງໄດ້ກ່າວວ່າການວິເຄາະເຖິງຄວາມຕ້ອງການ ແມ່ນຄວາມຈຳເປັນທີ່ເປັນພື້ນຖານຂອງການອອກແບບຫລັກສູດ ການຮຽນ-ການສອນ ແລະ ສື່ປະກອບການຮຽນ-ການສອນຕ່າງໆ. ດັ່ງນັ້ນ, ການວິເຄາະຄວາມຕ້ອງການ ແມ່ນຄວາມຈຳເປັນພື້ນຖານແທ້ຈິງ ເພື່ອການສ້າງ ແລະ ອອກແບບສື່ການຮຽນ-ການສອນຕ່າງໆ ໂດຍຜ່ານການຄັດເລືອກກຸ່ມຕົວຢ່າງໃຫ້ຖືກຕ້ອງເໝາະສົມ ແລະ ການອອກແບບສອບຖາມເພື່ອລົງສຳຫລວດຕົວຈິງ ເພື່ອເປັນການຊ່ວຍຫລຸດຊ່ອງຫວ່າງລະຫວ່າງກຸ່ມຜູ້ໃຊ້ງານຕົວຈິງ ແລະ ຊ່ວຍເສີມສ້າງປະສິດທິພາບໃນການເຮັດວຽກງານຕົວຈິງ.

### 2.2 ວິທີການຄົ້ນຄວ້າ

ກຸ່ມຕົວຢ່າງທີ່ໃຊ້ເຂົ້າໃນການຄົ້ນຄວ້າຄັ້ງນີ້ ເປັນທຸລະກິດSMEs ໃນນະຄອນຫຼວງພະບາງ. ໂດຍຕົວຢ່າງທີ່ໃຊ້ໃນການສຳຫຼວດທັງໝົດມີ 400 ຫົວໜ່ວຍທຸລະກິດ ແລະ ນຳໃຊ້ໂປຼແກມສຳເລັດຮູບທາງສະຖິຕິ SPSS 24.0 ໃນການວິເຄາະຫາລະດັບຄ່າຄວາມສຳຄັນທາງສະຖິຕິ ແລະ ການທົດສອບສົມມຸດຕິຖານ ເພື່ອວິເຄາະຄວາມຕ້ອງການບຸກຄະລາກອນທາງດ້ານພາສາຈີນ ໂດຍຈຳແນກຕາມຂະແໜງການຂອງທຸລະກິດ, ຂະໜາດຂອງທຸລະກິດ ແລະ ຮູບແບບການລົງທຶນໃນການດຳເນີນທຸລະກິດຂອງປະກອບການ ໃນນະຄອນຫຼວງພະບາງ, ໂດຍອີງຕາມ ເກນການກຳນົດຂອງກົດໝາຍວ່າດ້ວຍການສົ່ງເສີມວິສາຫະກິດຂະໜາດນ້ອຍ ແລະ ກາງ ປີ 2017 (Lattanakone,2023).

### 2.3 ວິທີການວິເຄາະຂໍ້ມູນ

1) ການວິເຄາະຂໍ້ມູນຄວາມຕ້ອງການ ແລະ ການນຳໃຊ້ພາສາຈີນຂອງທຸລະກິດSMEs ໃນນະຄອນຫຼວງພະບາງ ແມ່ນໃຊ້ສະຖິຕິແບບພັນລະນາ (Descriptive Statistic) ໃນການອະທິບາຍຜົນ ໂດຍໃຊ້ຕາຕະລາງແຈກແຈງຄວາມຖີ່ (Frequency), ຄ່າສ່ວນຮ້ອຍ (Percentage).

2) ການວິເຄາະຄຸນລັກສະນະຂອງບຸກຄະລາກອນທາງງດ້ານພາສາຈີນ ທີ່ທຸລະກິດSMEs ໃນນະຄອນຫຼວງພະບາງ ທີ່ມີຄວາມຕ້ອງການ ໂດຍການໃຊ້ສະຖິຕິອ້າງອີງ (Reference Statistics) ໃນການວິເຄາະ ແລະ ອະທິບາຍຜົນ ດ້ວຍຄ່າສະເລ່ຍ, ຄ່າຜັນປ່ຽນມາດຕະຖານ ແລະ ການທົດສອບສົມມຸດຖານ ດ້ວຍວິທີການທົດສອບແບບ F-Test (ANOVA) ເພື່ອຫາຄ່າຄວາມຕ້ອງການທີ່ແຕກຕ່າງ.

## 3. ຜົນໄດ້ຮັບ

### 3.1 ຂໍ້ມູນກ່ຽວກັບທຸລະກິດແລະ ການນຳໃຊ້ພາສາຈີນຂອງທຸລະກິດ SMEs ໃນນະຄອນຫຼວງພະບາງ

ສະພາບລວມຂອງຜູ້ປະກອບການທຸລະກິດ ໃນນະຄອນຫຼວງພະບາງ ສ່ວນຫຼາຍແມ່ນເພດຍິງ (58.8%), ມີອາຍຸລະຫວ່າງ 41-50 ປີ (70.0%), ທີ່ມີສະຖານະພາບແຕ່ງງານແລ້ວ (88.0%), ມີລະດັບການສຶກສາປະລິນຍາຕີ (60.5%) ແລະ ເປັນທຸລະກິດບໍລິການກວມ (45.4%) ໂດຍມີການດຳເນີນທຸລະກິດໃນລະຫວ່າງ 6-10 ປີ (41.0%), ເປັນທຸລະກິດຂະໜາດນ້ອຍ ທີ່ມີແຮງງານໃນການດຳເນີນງານລະຫວ່າງ 6-50 ຄົນ (51.59%) ແລະ ທີ່ດຳເນີນທຸລະກິດໃນຮູບແບບບຸກຄົນ (79.5%).

ສະພາບການນຳໃຊ້ພາສາຈີນໃນຫົວໜ່ວຍທຸລະກິດ SMEs ໃນນະຄອນຫຼວງພະບາງ ພົບວ່າ: ຫົວໜ່ວຍທຸລະກິດ SMEs ໃນນະຄອນຫຼວງພະບາງ ທີ່ມີພະນັກງານ ຫຼື ບຸກຄະລາກອນທາງດ້ານພາສາຈີນໃນອົງກອນ ກວມ 45% ແຕ່ຍັງບໍ່ສາມາດຕອບສະໜອງກັບຄວາມຮຽກຮ້ອງຕ້ອງການຂອງວຽກງານໃນອົງກອນ. ເນື່ອງຈາກວ່າ ບຸກຄະລາກອນທາງດ້ານພາສາຈີນແມ່ນມີຈຳນວນໜ້ອຍ ແລະ ລະດັບຄວາມຮູ້ດ້ານພາສາຈີນຍັງບໍ່ທັນສູງ, ໂດຍສ່ວນໃຫຍ່ແມ່ນຈົບພາສາຈີນໃນຫຼັກສູດຝຶກອົບຮົມໃນໄລຍະສັ້ນ ປະມານ 1 ປີ ກວມ 61% ໃນສູນຝຶກອົບຮົມພາຍໃນປະເທດ ກວມ 52% ແລະ ຈຳນວນໜຶ່ງກໍ່ມີໃບຢັ້ງຢືນລະດັບພາສາຈີນຂອງສາກົນ (HSK3-4) ພຽງແຕ່ 15% ແລະ ການນຳໃຊ້ພາສາຈີນໃນຫົວໜ່ວຍທຸລະກິດ SMEs ນະຄອນຫຼວງພະບາງ ສ່ວນຫຼາຍແມ່ນນຳໃຊ້ພາສາຈີນໃນການພົວພັນສື່ສານທົ່ວໄປ ກວມ 56% ແລະ ຜູ້ປະກອບການສ່ວນຫຼາຍໃຫ້ຄວາມຄິດເຫັນວ່າ ປັດຈຸບັນ ບຸກຄະລາກອນທາງດ້ານພາສາຈີນ ແມ່ນມີຄວາມສຳຄັນຫຼາຍ ກວມ 79%.

### 3.2 ຂໍ້ມູນກ່ຽວກັບຄວາມຕ້ອງການບຸກຄະລາກອນທາງດ້ານພາສາຈີນຂອງທຸລະກິດSMEs ໃນນະຄອນ ຫຼວງພະບາງ

ຄວາມຕ້ອງການບຸກຄະລາກອນທາງດ້ານພາສາຈີນໃນຫົວໜ່ວຍທຸລະກິດ SMEs ໃນນະຄອນຫຼວງພະບາງ ພົບວ່າ: ຫົວໜ່ວຍທຸລະກິດ SMEs ໃນນະຄອນຫຼວງພະບາງ ມີຄວາມຕ້ອງການບຸກຄະລາກອນດ້ານພາສາຈີນ ກວມ 56% ດ້ວຍເຫດຜົນທີ່ວ່າ: ທຸລະກິດມີຄວາມຈຳເປັນ ແລະ ຕ້ອງການຂະຫຍາຍກິດຈະການ ແຕ່ບຸກຄະລາກອນທາງດ້ານພາສາຈີນມີຄວາມຈຳກັດ ບໍ່ພຽງພໍກັບສະພາບການໃນປັດຈຸບັນ. ນອກນັ້ນ, ລະດັບພາສາຈີນຂອງພະນັກງງານໃນອົງກອນຍັງບໍ່ທັນສູງ ບໍ່ສາມາດຕອບໂຈດຄວາມຕ້ອງການຂອງວຽກໃນອົງກອນໄດ້ ແລະ ບາງອົງກອນແມ່ນຍັງບໍ່ທັນມີບຸກຄະລາກອນດ້ານພາສາຈີນ. ນອກຈາກນັ້ນ, ຍັງມີຜູ້ປະກອບການທຸລະກິດ SMEs ຈຳນວນໜຶ່ງຍັງບໍ່ມີຄວາມຕ້ອງການບຸກຄະລາກອນດ້ານພາສາຈີນ ກວມ 44% ດ້ວຍເຫດຜົນທີ່ວ່າ: ບຸກຄະລາກອນດ້ານພາສາຈີນມັກມີການປ່ຽນວຽກໄປຕາມອົງກອນທີ່ໃຫ້ຜົນປະໂຫຍດ ແລະ ມີການຮຽກຮ້ອງຜົນຕອບແທນສູງ, ແຕ່ບາງອົງກອນແມ່ນຍັງບໍ່ມີຄວາມຈຳເປັນບຸກຄະລາກອນດ້ານພາສາຈີນໃນອົງກອນຂອງຕົນ.

ນອກຈາກນີ້, ຜົນຂອງການສຳຫຼວດຍັງພົບວ່າ: ຫົວໜ່ວຍທຸລະກິດ SMEs ໃນນະຄອນຫຼວງພະບາງ ຈຳນວນ 67% ແມ່ນບໍ່ມີຄວາມຕ້ອງການຝຶກອົບຮົມ ຫຼື ຍົກລະດັບຄວາມຮູ້ທາງດ້ານພາສາຈີນໃຫ້ກັບພະນັກງານ, ເນື່ອງຈາກສະພາບເສດຖະກິດໃນປັດຈຸບັນມີການປ່ຽນແປງຢ່າງວ່ອງໄວ, ການດຳເນີນງານໃນອົງກອນບໍ່ມີຄວາມໝັ້ນຄົງ, ງົບປະມານຂອງອົງກອນມີຄວາມຈຳກັດ ແລະ ພະນັກງານມີການປັບປ່ຽນ/ຍົກຍ້າຍ ເຫຼົ່ານີ້ເປັນຕົ້ນ. ສ່ວນຈຳນວນທີ່ເຫຼືອ 33% ແມ່ນມີຄວາມຕ້ອງການຈັດຝຶກອົບຮົມ ຫຼື ຍົກລະດັບຄວາມຮູ້ທາງດ້ານພາສາຈີນໃຫ້ກັບພະນັກງານ ຂອງຫົວໜ່ວຍທຸລະກິດ SMEs ໃນນະຄອນຫຼວງພະບາງທີ່ມີຄວາມຕ້ອງການບຸກຄະລາກອນດ້ານພາສາຈີນ. ເຊິ່ງມີຈຸດປະສົງຫຼັກແມ່ນ 1) ເພື່ອການຂະຫຍາຍການພົວພັນຮ່ວມມື ແລະ ພັດທະນາອົງກອນ; 2) ເພື່ອຍົກລະດັບຄວາມຮູ້-ຄວາມສາມາດທາງດ້ານພາສາໃຫ້ກັບພະນັກງານ; 3) ເພື່ອສ້າງການຈູງໃຈໃຫ້ກັບພະນັກງານໃນອົງກອນ. ໃນນັ້ນ, ຫລັກສູດທີ່ຕ້ອງການຝຶກອົບຮົມສ່ວນຫຼາຍແມ່ນຕ້ອງການຝຶກອົບຮົມພາສາຈີນທີ່ສາມາດນຳໃຊ້ໃນວຽກງານຂອງອົງກອນ, ໂດຍມີໄລຍະເວລາຮຽນບໍ່ເກີນ 1 ປີ ຫຼື 4 ເທີມ ໃນພາກແລງ ຫຼື ພາກຄ່ຳ ຂອງວັນລັດຖະການ ທີ່ມີອາຈານສອນຮ່ວມກັນລະຫວ່າງຄົນລາວ ແລະ ຄົນຈີນ.

### 3.3 ຄຸນລັກສະນະທີ່ໃຊ້ພິຈາລະນາບຸກຄະລາກອນທາງດ້ານພາສາຈີນຂອງທຸລະກິດ SMEs ນະຄອນຫຼວງພະບາງ

ຜົນຈາກການສຶກສາພົບວ່າ: ທຸລະກິດ SMEsໃນນະຄອນຫຼວງພະບາງ ໄດ້ມີຄວາມຕ້ອງການບຸກຄະລາກອນດ້ານພາສາຈີນທີ່ມີຄຸນລັກສະນະດ້ານ: ຄວາມສາມາດດ້ານພາສາຈີນ, ທັກສະການສື່ສານດ້ານພາສາຈີນ ແລະ ຄວາມ

ເຂົ້າໃຈໃນວັດທະນະທຳຈີນ ໃນລະດັບຫຼາຍທີ່ສຸດ ທີ່ມີຄ່າສະເລ່ຍ $\bar{x}$=4.25 (ໂດຍອີງຕາມເກນການກຳນົດຄ່າລະດັບຂອງ Likert ທີ່ມີຄ່າສະເລ່ຍລະຫວ່າງ 4.21 ຫາ 5.00 ໝາຍເຖິງ ມີລະດັບຄວາມສຳຄັນຫຼາຍທີ່ສຸດ). ນອກຈາກນັ້ນ, ຍັງໄດ້ມີຄວາມຕ້ອງການບຸກຄະລາກອນທີ່ມີຄຸນລັກສະນະດ້ານ: ຄຸນສົມບັດແລະສົມທາປະຕິບັດ, ທັດສະນະຄະຕິຕໍ່ອີງກອນ ແລະ ທັກສະວິຊາຊີບ ຢູ່ໃນລະດັບຫຼາຍທີ່ມີຄ່າສະເລ່ຍ $\bar{x}$=3.53 ຫາ $\bar{x}$=3.74. ສ່ວນຄຸນລັກສະນະດ້ານການປະຍຸກຄວາມໝາຍຂອງພາສາຈີນ ແລະ ຄວາມຄິດສ້າງສັນ ທຸລະກິດ SMEs ໃນນະຄອນຫຼວງພະບາງ ໄດ້ມີຄວາມຕ້ອງການໃນລະດັບປານກາງ ໂດຍມີຄ່າສະເລ່ຍ $\bar{x}$ =3.37.

ການທົດສອບສົມມຸດຖານເພື່ອວິເຄາະຄວາມຕ້ອງການບຸກຄະລາກອນທາງດ້ານພາສາຈີນຂອງທຸລະກິດ SMEs ໃນນະຄອນຫຼວງພະບາງທີ່ແຍກຕາມຂະແໜງການຂອງທຸລະກິດ, ຂະໜາດຂອງທຸລະກິດ ແລະ ຮູບແບບຂອງການດຳເນີນທຸລະກິດ ດ້ວຍວິທີການແບບ F-Test (ANOVA) ໂດຍຜົນຂອງການສຶກສາພົບວ່າ:

1. ທຸລະກິດ SMEsໃນນະຄອນຫຼວງພະບາງທີ່ມີຂະແໜງ: ການຜະລິດ, ການຄ້າ ແລະ ການ ທີ່ມີຄວາມຕ້ອງການບຸກຄະລາກອນທາງດ້ານພາສາຈີນແມ່ນບໍ່ແຕກຕ່າງກັນ.

2. ທຸລະກິດ SMEsໃນນະຄອນຫຼວງພະບາງທີ່ມີຂະໜາດ: ຈຸນລະວິສາຫະກິດ, ວິສາຫະກິດຂະໜາດນ້ອຍ ແລະ ວິສາຫະກິດຂະໜາດກາງ ຂອງທຸລະກິດ SMEs ໃນນະຄອນຫຼວງພະບາງໄດ້ ແມ່ນມີຄວາມຕ້ອງການບຸກຄະລາກອນທາງດ້ານພາສາຈີນທີ່ແຕກຕ່າງກັນໃນດ້ານ: ຄວາມເຂົ້າໃຈໃນວັດທະນະທຳຈີນ ແລະ ທັດສະນະຄະຕິຕໍ່ອີງກອນ.

3. ທຸລະກິດ SMEsໃນນະຄອນຫຼວງພະບາງທີ່ມີການດຳເນີນທຸລະກິດໃນຮູບແບບ: ສ່ວນບຸກຄົນ ແລະ ຮ່ວມຫຸ້ນ ແມ່ນມີຄວາມຕ້ອງການບຸກຄະລາກອນທາງດ້ານພາສາຈີນທີ່ແຕກຕ່າງກັນໃນດ້ານ: ຄວາມຄິດສ້າງສັນ ແລະ ທັດສະນະຄະຕິຕໍ່ອີງກອນ.

## 4. ວິພາກຜົນ

ຈາກການສຶກສາຄວາມຕ້ອງການ ແລະ ການນຳໃຊ້ພາສາຈີນໃນຫົວໜ່ວຍທຸລະກິດ SMEs ໃນນະຄອນຫຼວງພະບາງ ກ່ຽວກັບແມ່ນມີຄວາມສຳຄັນ ແລະ ຈຳເປັນໃນການສ້າງ-ອອກແບບ ແລະ ພັດທະນາຫຼັກສູດ, ການຮຽນການສອນ ແລະ ກິດຈະກຳຕ່າງໆ ໃນສະຖາບັນຊັ້ນສູງ ທີ່ເປັນອີງກອນທາງດ້ານພາສາແລະວັດທະນະທຳຈີນຢູ່ຕ່າງປະເທດ ໂດຍສະເພາະຫຼັກສູດພາສາຈີນ ແລະ ບຸກຄະລາກອນດ້ານພາສາຈີນ ເພື່ອໃຫ້ມີຄວາມສອດຄ່ອງກັບສະພາບຄວາມເປັນຈິງໃນຂົງເຂດ ຫຼື ໃນສັງຄົມນັ້ນໆ ເຊິ່ງມີຄວາມສອດຄ່ອງກັບທິດສະດີຂອງ Ellis & Johnson (2009) & Jordan (1997) ທີ່ກ່າວວ່າ ການສຶກສາສະພາບຄວາມຕ້ອງການແລະການນຳໃຊ້ທາງດ້ານພາສາ ແລະ ດ້ານຫຼັກສູດຕ່າງໆຂອງຜູ້ຮຽນ/ຜູ້ໃຊ້ງານ ແມ່ນຄວາມຈຳເປັນພື້ນຖານທີ່ຄວນສຶກສາຈາກຜູ້ໃຊ້ງານຈິງ ແລະ ເປັນບ່ອນອີງໃນການອອກແບບ-ກຳນົດຫຼັກສູດ, ວິທີການສອນ ແລະ ກິດຈະກຳທີ່ຕ້ອງການພັດທະນາທັກສະທີ່ມີຕໍ່ຜູ້ຮຽນ ແລະ ຜູ້ປະກອບອາຊີບໃນອີງກອນ.

ຜົນການສຶກສາກ່ຽວກັບລະດັບຄວາມຕ້ອງການນຳໃຊ້ພາສາຈີນຕໍ່ກັບທຸລະກິດຂະໜາດນ້ອຍໃນນະຄອນຫຼວງພະບາງ ແມ່ນຢູ່ໃນລະດັບຫຼາຍ. ໂດຍສະເພາະ, ແມ່ນໃຊ້ໃນການສື່ສານທົ່ວໄປ ເຊິ່ງມີຄວາມສອດຄ່ອງກັບການຄົ້ນຄ້ວາ Sakda Tharanisorn (2004) ທີ່ສຶກສາຄວາມຕ້ອງການໃຊ້ພາສາຈີນໃຊ້ພາສາຈີນຂອງຜູ້ປະກອບການທຸລະກິດໃນການພັດທະນາເຂດເສດຖະກິດຊາຍແດນຈັ່ງຫວັດຊຽງລາຍ ແລະ Poengtrummarong (2018) ທີ່ສຶກສາກ່ຽວກັບ "ຄວາມຕ້ອງການໃຊ້ພາສາຈີນ ເພື່ອການສື່ສານກັບນັກທ່ອງທ່ຽວຂອງພະນັກງານໃນໂຮງແຮມເຂດອຳເພີເມືອງ ຈັ່ງຫວັດການຈະບູລີ ພົບວ່າ: ລ້ວນແຕ່ມີຄວາມຕ້ອງການໃຊ້ພາສາຈີນຢູ່ໃນລະດັບຫຼາຍເຊັ່ນກັນ.

ຜົນການສຶກສາກ່ຽວກັບຄວາມຕ້ອງການບຸກຄະລາກອນດ້ານພາສາຈີນຂອງທຸລະກິດ SMEs ໃນນະຄອນຫຼວງພະບາງ ຕ້ອງມີຄຸນລັກສະນະທີ່ສຳຄັນໃນ 3 ດ້ານ ຄື:

- ຄວາມສາມາດດ້ານພາສາຈີນ ເຊິ່ງມີຄວາມສອດຄ່ອງກັບການຄົ້ນຄ້ວາຂອງ Koo Yew Lie (2008) ທີ່ສຶກສາ ການຍອມຮັບຂອງຜູ້ຈ້າງງານໃນອົງກອນຕໍ່ກັບຄວາມຮູ້ຂອງນັກສຶກສາທີ່ຈົບການສຶກສາຈາກການສຶກສາຊັ້ນສູງ ພົບວ່າ ຜູ້ຈ້າງງານໃນອົງກອນຕ່າງໆ ໃຫ້ຄວາມສຳຄັນຕໍ່ຄວາມສາມາດທາງດ້ານພາສາທີ່ມີລະດັບຄວາມສຳຄັນໃນລະດັບຫຼາຍ ໂດຍສອດຄ່ອງກັບແນວຄິດຂອງ Kubler & Forbes (2004) ທີ່ໄດ້ລະບຸວ່າ ຄວາມສາມາດທາງດ້ານພາສາ ແມ່ນຄຸນລັກສະນະໜຶ່ງທີ່ສຳຄັນ ເຊິ່ງພາສາ ແລະ ທັກສະການໃຊ້ພາສາໃນອົງກອນແມ່ນມີຄວາມສຳຄັນຫຼາຍ ເພາະມັນມີຄວາມອ່ອນໄຫວ ແລະ ສິ່ງຜົນຕໍ່ການພົວພັນສື່ສານ ການປະພັນ ຫຼື ການຜະລິດຂໍ້ຄວາມ ແລະ ສື່ຄວາມໝາຍຂອງອົງກອນ.

- ທັກສະການສື່ສານດ້ານພາສາຈີນ ເຊິ່ງມີຄວາມສອດຄ່ອງກັບການຄົ້ນຄ້ວາຂອງ Koo Yew Lie, V. Pang (2008) ທີ່ສຶກສາ ການຍອມຮັບຂອງຜູ້ຈ້າງງານໃນອົງກອນຕໍ່ກັບຄວາມຮູ້ຂອງນັກສຶກສາທີ່ຈົບການສຶກສາຈາກການສຶກສາຊັ້ນສູງ ພົບວ່າ ຄວາມສາມາດໃນການສື່ ສານວັດໄດ້ຈາກທັກສະການໃຊ້ເຄື່ອງມືພື້ນຖານ, ທັກສະ ການຈັດການຂໍ້ມູນ ແລະ ທັກສະໃນການສື່ສານກັບບຸກຄົນທົ່ວໄປທີ່ມີລະດັບຄວາມສຳຄັນໃນລະດັບປານກາງ ໂດຍສອດຄ່ອງກັບແນວຄິດຂອງ Devers (2007) ທີ່ໄດ້ລະບຸວ່າ ຄວາມສາມາດໃນການສື່ສານ ແມ່ນສາມາດສື່ສານແບບເຊyjງໜ້າ (face-to-face communication) ແລະ ສາມາດນຳໃຊ້ເຄື່ອງມືທັນສະໄໝ (multimodal and multimedia) ໃນການສື່ສານທີ່ຫຼາກຫຼາຍຮູບແບບ.

- ຄວາມເຂົ້າໃຈໃນວັດທະນະທຳຈີນ ເຊິ່ງສອດຄ່ອງກັບຜົນການສຶກສາຂອງ Witthayaphirom (2013) ການວິເຄາະຄວາມຕ້ອງການພາສາຈີນ ເພື່ອການສື່ສານຂ້າມວັດທະນະທຳ ທີ່ພົບວ່າ: ຄວາມເຂົ້າໃຈໃນວັດທະນະທຳ ແລະ ຄວາມສາມາດທາງດ້ານພາສາເປັນບາດກ້າວທີ່ສຳຄັນໃນການສື່ສານ ແລະ ພົວກັນໂດຍສະເພາະທາງທຸລະກິດ ແລະ ການຄົ້ນຄ້ວາຂອງ Koo Yew Lie (2008) ທີ່ສຶກສາ ພົບວ່າ ການເຂົ້າໃຈກ່ຽວກັບວັດທະນະທຳ ແລະ ປະເພນີຂອງປະເທດອື່ນໆ ຜູ້ຈ້າງງານໃນອົງກອນຕ່າງເຫັນດີ ແລະ ໄດ້ໃຫ້ຄວາມສຳຄັນ ໃນລະດັບປານກາງ. ໂດຍສອດຄ່ອງກັບ UNESCO (2004) ທີ່ໄດ້ລະບຸວ່າ ລັດຖະບານ, ຫົວໜ່ວຍທຸລະກິດ ແລະ ປະຊາຊົນໃນສັງຄົມ ແມ່ນມີຄວາມສຳຄັນໃນການສົ່ງເສີມຄວາມຫຼາກຫຼາຍ ແລະ ຄວາມແຕກຕ່າງທາງດ້ານວັດທະນະທຳ.

## 5. ສະຫຼຸບ

ການນຳໃຊ້ພາສາຈີນຂອງຫົວໜ່ວຍທຸລະກິດ SMEs ໃນນະຄອນຫຼວງພະບາງ ເຫັນວ່າ ຫົວໜ່ວຍທຸລະກິດ SMEs ສ່ວນຫຼາຍແມ່ນຍັງບໍ່ມີພະນັກງານທາງດ້ານພາສາຈີນ ແລະ ຍັງບໍ່ສາມາດຕອບສະໜອງກັບຄວາມຕ້ອງການຂອງວຽກໃນອົງກອນໄດ້, ເນື່ອງຈາກ ລະດັບພາສາຈີນຍັງບໍ່ສູງ ແລະ ຍັງມີຄວາມຈຳກັດຫຼາຍດ້ານ. ເຊິ່ງປັດຈຸບັນຫົວໜ່ວຍທຸລະກິດ SMEs ໃນນະຄອນຫຼວງພະບາງ ແມ່ນຄວາມຕ້ອງການໃນລະດັບຫຼາຍຕໍ່ກັບບຸກຄະລາກອນທາງດ້ານພາສາຈີນ ເພື່ອການພົວພັນ ແລະ ຂະຫຍາຍທຸລະກິດ. ເຊິ່ງໃນນັ້ນ ຫົວໜ່ວຍທຸລະກິດ SMEs ຈຳນວນໜຶ່ງແມ່ນມີຄວາມຕ້ອງການຍົກລະດັບ/ບຳລຸງພາສາຈີນ ໃຫ້ກັບພະນັກງານຂອງຕົນ ເພື່ອເປັນການເພີ່ມຂະຫຍາຍການພົວພັນຮ່ວມມື ແລະ ພັດທະນາອົງກອນ, ທັງເປັນການຍົກລະດັບຄວາມຮູ້ ແລະ ເປັນການສ້າງແຮງຈູງໃນການເຮັດວຽກໃຫ້ກັບພະນັກງານໃນອົງກອນ, ເຊິ່ງຫຼັກສູດທີ່ມີຄວາມຕ້ອງການຝຶກອົບຮົມຫຼາຍກ່ວາໝູ່ແມ່ນ ພາສາຈີນສຳລັບນຳໃຊ້ໃນອົງກອນ ຫຼື ກ່ຽວຂ້ອງໃນອົງກອນ ທີ່ມີໄລຍະເວລາບໍ່ເກີນ 1 ປີ ໂດຍຮຽນຮ່ວມກັບອົງກອນອື່ນ ຫຼື ການເປີດສອນທົ່ວໄປ ໃນພາກແລງ/ຄ່ຳຂອງວັນລັດຖະການ ທີ່ສອນໂດຍອາຈານຄົນລາວ ກັບ ອາຈານຈີນສອນຮ່ວມກັນ.

ຫົວໜ່ວຍທຸລະກິດ SMEs ໃນນະຄອນຫຼວງພະບາງ ມີຄວາມຕ້ອງການບຸກຄະລາກອນດ້ານພາສາຈີນທີ່ມີ

ຄຸນລັກສະນະທີ່ສໍາຄັນໃນ 3 ດ້ານຄື: ຄວາມສາມາດດ້ານພາສາຈີນ, ທັກສະໃນການສື່ສານດ້ານພາສາຈີນ ແລະ ເຂົ້າໃຈໃນວັດທະນະທໍາຈີນ. ນອກນັ້ນ, ຜົນການທົດສອບສົມມຸດຖານຍັງພົບວ່າ: 1) ຫົວໜ່ວຍທຸລະກິດ SMEs ທີ່ມີຂະ ແໜງການຜະລິດ, ການຄ້າ ແລະ ການບໍລິການ ໃນນະຄອນ ຫຼວງພະບາງ ແມ່ນມີຄວາມຕ້ອງການບຸກຄະລາກອນທາງດ້ານພາສາຈີນຄ້າຍກັນ (ບໍ່ແຕກຕ່າງກັນ); 2) ຫົວໜ່ວຍທຸລະກິດ SMEs ທີ່ມີຂະໜາດທຸລະກິດເປັນຈຸນລະວິສາຫະກິດ, ລະວິສາຫະກິດຂະໜາດນ້ອຍ ແລະ ລະວິສາຫະກິດຂະໜາດກາງ ໃນນະຄອນຫຼວງພະບາງໄດ້ ແມ່ນມີຄວາມຕ້ອງ ການບຸກຄະລາກອນທາງດ້ານພາສາຈີນທີ່ແຕກຕ່າງກັນໃນດ້ານ: ຄວາມເຂົ້າໃຈໃນວັດທະນະທໍາຈີນ ແລະ ທັດສະນະຄະຕິຕໍ່ອົງກອນ; 3)ຫົວໜ່ວຍທຸລະກິດ SMEs ທີ່ມີ ຮູບແບບການດໍາເນີນງານໃນແບບສ່ວນບຸກຄົນ ແລະ ແບບຮ່ວມທຶນ ໃນນະຄອນຫຼວງພະບາງ ແມ່ນມີຄວາມຕ້ອງການບຸກຄະລາກອນທາງດ້ານພາສາຈີນ ທີ່ແຕກຕ່າງກັນໃນດ້ານຄວາມຄິດສ້າງສັນ ແລະ ທັດສະນະຄະຕິຕໍ່ອົງກອນ.

## 6. ຂໍ້ຂັດແຍ່ງ

ຂ້າພະເຈົ້າໃນນາມຜູ້ຄົ້ນຄວ້າວິທະຍາສາດ ຂໍປະຕິຍານຕົນວ່າ ຂໍ້ມູນທັງໝົດທີ່ມີໃນບົດຄວາມວິຊາການດັ່ງກ່າວນີ້ ແມ່ນບໍ່ມີຂໍ້ຂັດແຍ່ງທາງຜົນປະໂຫຍດກັບພາກສ່ວນໃດ ແລະ ບໍ່ໄດ້ເອື້ອປະໂຫຍດໃຫ້ກັບພາກສ່ວນໃດພາກສ່ວນໜຶ່ງ.

## 7. ເອກະສານອ້າງອີງ

Brown, J. D. (1995). The Elements of Language Curriculum: A Systematic Approach to Program Development. Heinle and Heinle.

Boston. Brumfit, C. J., & Johnson, R.K. (1979). The Communicative Approach to Language Teaching. Oxford: The University Press.

Brumfit, C. J., & Roberts, J. T. (1983). A Short Introduction to Language and Language Teaching: With a Comprehensive Glossary of Terms. London: Batsford Academic and Education.

Ellis, M. & Johnson, C. (2009). Teaching Business English. Oxford: Oxford University Press.

Jordan, R.R. (1997). English for Academic Purposes: A guide and Resource Book for Teachers. Cambridge: Cambridge University Press.

Koo Yew Lie (2007a). Mindful PluriLiteracy (PL) For Multilingual Learners: Sustaining Diverse Cultures in Language and Literacy Education. In Ambigapathy Pandian.

Koo Yew Lie & Peter Kell. (eds). Innovation and Intervention in ELT: Pathways and practices. Pp: 26 – 45. Serdang: Universiti Putra Malaysia Press.

Koo Yew Lie (2007b). The pluralist literacies of Malaysian Chinese learners in Higher Education. In P. Kell & G. Vogl. (eds). Higher Education in the Asia Pacific: Challenges for the future. Pp: 178 –201. Newcastle: Cambridge Scholars Press.

Koo Yew Lie. (2006a). Exploring pluriliteracy as theory and practice in multilingual/cultural contexts. In 3L Journal of Language Teaching, Linguistics and Literature, 11: 79-98.

Koo Yew Lie. (2006b). Exploring Reflexive Pluriliteracy in theory and practice in ELT. In 3L Journal of Language Teaching, Linguistics and Literature, 11: 79 – 98.

Koo Yew Lie, V. Pang. (2008). Employer Perceptions on Graduate Literacies in Higher Education in Relation to the Workplace. University Kebangsaan Malaysia & Universiti Malaysia Sabah, Fadhil Mansur Published.

Kubler, B. & Forbes, P. (2004). Employability Guide: Student Employability Profile. United Kingdom: Enhancing Student Employability Coordination Team of the Higher Education Academy (ESECT), The Council for Industry and Higher Education (CIHE) and, Higher Education Academy

Learning and Teaching Support Network (LTSN).

Witthayaphirom, K. (2013). “Needs Analysis of Cross Cultural for Business Chinese” [J]. Chinese Studies Journal Kasetsart University. Vol.6(6): 259-276.

Lattanakone,2023. “Factors Affecting Small Business Operators in Luang Prabang City” [J]. Souphanouvong University Academic Journal, 9(2):138-145.

Lehtonen, T., & Karjalained, S. 2008. University Graduates’ Workplace Language Needs as Perceived by Employers. Retrieved July 21, 2010.

Likert, R. (1932). A technique for the measurement of attitudes” archives of Psychology: 1-55.

Poengtrummarong, V. (2018). Chinese Language needs to communication with the tourist staff of hotel front in Muang District, Kanchaburi Province. [J]. Journal of Administrative and Management, 6(2): 74-79.

Tharanisorn, S. (2004). The need to use the Chinese language of entrepreneurs in the development of the border economic zone in Chiang Rai province. Thesis of Business Administration School Mae Fah Luang University

UNESCO. (2004). Workshop on “All different, all unique: Young people and the UNESCO Universal Declaration on Cultural Diversity” by UNESCO & OXFAM International Youth Parliament, Sidney. Paris: Division of Cultural policies and intercultural dialogue, Culture Sector (Sector for Youth), Bureau of Strategic Planning, UNESCO.